## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 16 ກໍຣະກະດາ 2023 (07-16-2023)

---

## ແຍກໄວ້: ເພື່ອຄວາມບໍຣິສຸດຂອງພຣະເຈົ້າ

*ແມ່ນຫຍັງຄືບາງຢ່າງທີ່ທ່ານເປັນເຈົ້າຂອງທີ່ຄິດວ່າມັນພິເສດ?*

**ຈຸດສໍາຄັນໃນບົດຮຽນ:** ພຣະເຈົ້າຊົງບໍຣິສຸດແລະແຍກໄວ້ຈາກທຸກໆສິ່ງທີ່ພຣະອົງສ້າງຂຶ້ນມາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າໄດ້ເອົາຈິງເອົາຈັງກ່ຽວກັບຄວາມເຊື່ອຂອງຂ້າພະເຈົ້ານັບຕັ້ງແຕ່ການໄດ້ຕ້ອນຮັບເອົາພຣະຄຣິດ. ຢ່າງຮີບດ່ວນຫຼັງຈາກການຮັບເຊື່ອແລະຮັບບັບຕິສະມາ, ຂ້າພະເຈົ້າຕັດສິນໃຈເປັນລູກສິດກ່ອນຈະໄປເຂົ້າວິທຍາລັຍ. ຫຼັງຈາກການມາເຖິງວິທຍາລັຍໃຫຍ່ຂອງລັດ, ຂ້າພະເຈົ້າໄດ້ເອົາຫ້ອງສາສນາສາດທີ່ສອນໃນຫ້ອງໂຖງໃຫຍ່ກັບອາຈານສອນທີ່ເຊື່ອໃນສາສນາພຸດແລະມີນັກສຶກສາຫຼາຍກ່ວາສອງຮ້ອຍຄົນຈາກທຸກສາລະທິດທີ່ມີພື້ນຖານຕ່າງກັນກ່ຽວກັບສາສນາສາດ.

ເຖິງແມ່ນວ່າຂ້າພະເຈົ້າໄດ້ອຸທິດຕົນເປັນຜູ້ຕິດຕາມ-ພຣະຄຣິດ, ຂ້າພະເຈົ້າໄດ້ເລີ້ມຕົ້ນຄົ້ນຄ້ວາຫາລະບົບການທີ່ແຕກຕ່າງກັນຂອງການເຊື່ອເພື່ອຫາຊ່ອງທາງທີ່ດີກວ່າຕໍ່ການແບ່ງປັນຄວາມເຊື່ອຂອງຂ້າພະເຈົ້າໃນພຣະເຢຊູ. ອັນນີ້ໄດ້ນໍາສູ່ການຄົ້ນຄ້ວາເປັນເວລາຫຼາຍປີໃນຊຸມຊົນສາສນາທົ່ວທະວີບ. ຂ້າພະເຈົ້າໄດ້ສົນທະນາຢ່າງສນິດສນົມກ່ຽວກັບຄວາມຈິງອັນສູງສຸດແລະເຣື່ອງຂອງພຣະເຢຊູກັບ ແຮຄຣີສນາ (Hare **Krishnas)** ໃນເມືອງ ໂຕຣອນໂຕ (**Toronto)**, ຊາວມຸດສະລິມພື້ນຖານທີ່ຢູ່ໃນສູນອິດສະລາມໃນເມືອງ ຊິກາໂກ (Chicago), ແລະ Unitarian Universalists ໃນໃຈກາງເມືອງ ຟີລາເດັນເຟັຽ (**Philadelphia)**.

ໃນຄວາມເປັນຈິງ, ຂ້າພະເຈົ້າໄດ້ສົນທະນາໃນຫຼາຍໆທີ່ ອາສຣັມ (ashrams)(ທໍາທີ່ຊາວຮິນດູໃຊ້ນະມັສການ), ໃນວັດ, ແລະບ່ອນຈໍາສິນຫຼາຍແຫ່ງທີ່ຂ້າພະເຈົ້າສາມາດຈື່ໄດ້. ແລະຕໍ່ຕ້ານກັບສິ່ງທີ່ປາກົດອອກໃຫ້ເຫັນຊຶ່ງຄວາມຈິງຕົ້ນຕໍອັນນຶ່ງທີ່ປະກົດອອກຢ່າງໂດດເດັ່ນ: ພຣະເຈົ້າໃນພຣະຄັມພີເປັນພຣະເຈົ້າອົງບໍຣິສຸດ. ພຣະອົງຊົງແຕກຕ່າງຈາກການສ້າງຂອງພຣະອົງ. ລັກສະນະເຫຼົ່ານີ້ຈໍາແນກພຣະອົງຈາກທຸກອັນທີ່ເອີ້ນວ່າພະອື່ນໆ. ໃຫ້ພວກເຮົາຮຽນຮູ້ເພີ້ມເຕີມກ່ຽວກັບເຣື່ອງພຣະເຈົ້າອົງທ່ຽງແທ້, ແຕ່ອົງດຽວ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>**ສຶກສາພຣະຄັມພີ**</u>

### 1. ເພງສັຣເສີນ 99:1-3.

*1. ພຣະຜູ້ເປັນເຈົ້າຊົງຄອບຄອງໃຫ້ຊົນຊາດທັງຫລາຍຕົວສັ່ນ ພຣະອົງຜູ້ປະທັບລະຫວ່າງພວກເຄຣຸບໃຫ້ແຜ່ນດິນໂລກຫວັ່ນໄຫວ. 2. ພຣະຜູ້ເປັນເຈົ້າຍິ່ງໃຫ່ຍູ່ໃນຊີໂອນ ພຣະອົງສູງເດັ່ນຢູ່ເໜືອປະຊາຊາດທັງປວງ. 3. ໃຫ້ພວກເຂົາສັນລະເສີນພຣະນາມອັນຍິ່ງໃຫຍ່ແລະໜ້າຢ້ານກົວຂອງພຣະອົງ ເພາະພຣະນາມນັ້ນບໍຣິສຸດ.*

ພຣະເຈົ້າໄດ້ຊົງດົນໃຈກະສັດດາວິດໃຫ້ຂຽນບົດເພງສັຣເສີນ ບົດ 99. ແລະໃນເວລານີ້ເປັນບົດເພງນຶ່ງທີ່ມີຣິດອໍານາດເປັນທີ່ນິຍົມທີ່ສຸດໃນພຣະຄັມພີ, ຄໍາວ່າ "ເພງສັຣເສີນ" ມີຄວາມໝາຍວ່າ "ເນື້ອເພງ" ໃນພາສາເຮັບເຣີຕົ້ນສະບັບຂອງພຣະຄັມພີເດີມ. ປື້ມເພງສັຣເສີນຖືກເອີ້ນວ່າເປັນບົດສວດຂອງຊາວອິສຣາເອນບູຮານ.

ເຖິງແມ່ນວ່າມີ "ບົດເພງ" ຫຼາຍເພງປາກົດຢູ່ທົ່ວທຸກໜ້າຂອງພຣະຄັມພີ (ເພງສັຣເສີນຂອງໂມເຊແລະມີຣິອາມ, ໃນ ອົບພະຍົບບົດທີ 15; ເພງຂອງເດໂບຣາ Deborah, ພວກຜູ້ປົກຄອງບົດທີ 5; ເພງແຫ່ງໄຊຊະນະຂອງດາວິດ. 1 ຊາມູເອນ ບົດ 18 ເພງຂອງ

ນາງມາລີອາ, ລູກາ ບົດທີ 1), ພຣະຄັມພີສາມເຫຼັ້ມແມ່ນມີແຕ່ເພງທີ່ສັກສິດ.

1. **ເພງສັຣເສີນ** ປະກອບມີ150 ເພງ, ແບ່ງອອກເປັນຫ້າປື້ມ. ແຕ່ລະປື້ມມີຫົວເຣື່ອງກວ້າງຂວາງ.
2. **ເພງຄໍ່າຄວນ** ແມ່ນ ການໄວ້ອາລັຍທັງຫ້າ, ຄວາມໂສກເສົ້າຢ່າງເລິກເຊິ່ງກ່ຽວກັບເຢຣູຊາເລັມຖືກທໍາລາຍ; ແລະ
3. **ຍອດເພງ** ເປັນເພງທີ່ສັກສິດດຽວກ່ຽວກັບການແຕ່ງງານແລະຄວາມຮັກອັນສູງສົ່ງ.

ບົດເພງສັຣເສີນແມ່ນເປັນທີ່ຮູ້ຈັກກັນໃນນາມ "ພິນບູຮານ" ພິນບູຮານແມ່ນເປັນຄໍາສັບໃນພາສາລາຕິນທີ່ຮັບຮູ້ໜັງສືການເກັບກໍາເພງທີ່ໃຊ້ໃນການອຸທິດຕົນແລະພິທີສວດມົນ. ໃນຄໍາອື່ນອີກ, ບົດເພງສັຣເສີນ (ແລະແນ່ນອນໃນບົດ 99) ເປັນເພງເຊື້ອເຊີນພວກເຮົາໃຫ້ນະມັສການ. ການນະມັສການນີ້, ຕາມຄວາມເຂົ້າໃຈໂດຍຄວາມຕັ້ງໃຈຂອງພິນບູຮານ, ເພື່ອລວມເອົາການເຄົາລົບຂອງພຣະເຈົ້າໃນສະຖານະການສ່ວນຕົວ, ສ່ວນບຸກຄົນ(ການອຸທິດຕົນ)ແລະໃນການນະມັສການຮ່ວມກັນ.

ໃນບົດເພງສັຣເສີນ 99:1-3, ພວກເຮົາເຫັນການພັນລະນາເຖິງພຣະເຈົ້າວ່າເປັນກະສັດ, ເປັນການສະແດງເຖິງຄວາມຍິ່ງໃຫ່ຽຂອງພຣະອົງໃນຖານະເປັນກະສັດ. ໃນຂນະທີ່ກະສັດດາວິດໄດ້ຂຽນບົດເພງເຫຼົ່ານີ້ພາຍໃຕ້ການດົນໃຈຈາກພຣະເຈົ້າ, ທ່ານມີຄວາມເຂົ້າໃຈອັນແຫຼມຄົມກ່ຽວກັບການປົກຄອງຂອງພຣະເຈົ້າ. ຫຼັງຈາກທັງໝົດນີ້, ດາວິດເອງກໍຍິນດີຫຼາຍໆຢ່າງໃນການໄດ້ເປັນກະສັດ.

*ແມ່ນຫຍັງທີ່ທ່ານໄດ້ພົບເຫັນທີ່ເປັນແຮງບັນດານໃຈກ່ຽວກັບພຣະເຈົ້າ?*

ໃນຊ່ວງເວລານັ້ນ, ມັນບໍ່ແມ່ນເຣື່ອງແປກທີ່ກະສັດຝ່າຍໂລກແລະກະສັດຟາຣາໂອຈະຖືກຮັບຮູ້ວ່າເປັນກະສັດທີ່ສູງສົ່ງແລະໄດ້ຮັບການເຄົາລົບ. ແຕ່ໃນພຣະຄັມພີ, ພຣະເຈົ້າໄດ້ກໍານົດແຫຼ່ງທີ່ມາຕ່າງໆຂອງອໍານາດຂອງມະນຸດ. ທີ່ຈິງກະສັດດາວິດໄດ້ປະກາດວ່າທຸກໆຄົນທຸກທີ່ທຸກບ່ອນຕ້ອງສັຣເສີນນະມັສການພຣະເຈົ້າ. ຈາກນັ້ນດາວິດໄດ້ຄາດໝາຍເຖິງຄໍາຖາມທີ່ອາດມີຢູ່ໃນໃຈຂອງທຸກໆຄົນວ່າເປັນຫຍັງພຣະເຈົ້າຂອງຊາວອິສຣາເອນຈຶ່ງສົມຄວນໄດ້ຮັບການສັຣເສີນແບບນັ້ນ. ທ່ານໂຕ້ຕອບດ້ວຍການໃຫ້ເຫັນຄວາມຈະແຈ້ງງ່າຍດາຍໃນການປະກາດວ່າ, "ພຣະອົງເປັນອົງບໍຣິສຸດ."

ດາວິດເປັນກະສັດທີ່ເປັນມະນຸດນໍາພາປະຊາຊົນພາຍໃຕ້ຣັຖບານດຽວໂດຍອໍານາດທາງການເມືອງແລະການທະຫານຂອງທ່ານ. ແຕ່ໃນຂໍ້ພຣະຄໍາພີນີ້, ດາວິດໄດ້ຊີ້ໄປເຖິງກະສັດຂອງບັນດາກະສັດ, ຜູ້ທີ່ບໍ່ພຽງແຕ່ຈະໄດ້ຮັບການນະມັສການສັຣເສີນໂດຍປະຊາຊົນແຫ່ງພັນທະສັນຍາຂອງຊາວອິສຣາເອນເທົ່ານັ້ນ, ແຕ່ໂດຍທຸກຊົນຊາດຊົນເຜົ່າໃນໂລກ. ກະສັດອົງນີ້, ບໍ່ເໝືອນກະສັດດາວິດແລະຜູ້ອື່ນໆທີ່ປົກຄອງຢູ່ທົ່ວອານາຈັກຂອງໂລກນີ້ໃນພາກຕາວັນອອກກາງ, ໄດ້ຖືກປະກາດວ່າເປັນຜູ້ປົກຄອງໂລກ, ນັ່ງຢູ່ເທິງບັນລັງສວັນໃນຂນະທີ່ສ້າງແຜ່ນດິນໂລກເປັນບ່ອນຮອງຕີນຂອງພຣະອົງ (ເອຊາຢາ 66:1). ເຊັ່ນດຽວກັບຖ້ອຍຄໍາເຫຼົ່ານີ້ຂອງພຣະຄັມພີໄດ້ໃຫ້ທິດທາງຝ່າຍວິນຍານແກ່ປະຊາຊົນຢູດາແລະອິສຣາເອນໃນສມັຍຂອງດາວິດ (ປະມານ 1000 ປີກ່ອນ ຄສ.) ໃນທຸກວັນນີ້ມັນເປັນການສັ່ງສອນສໍາລັບພວກເຮົາ. ພຣະເຈົ້າເປັນພຣະເຈົ້າອົງບໍຣິສຸດຜູ້ຊົງພຣະຊົນເປັນຢູ່, ສູງສົ່ງແລະແຍກອອກ. ຄວາມຈິງເຫຼົ່ານີ້ຮຽກຮ້ອງໃຫ້ພວກເຮົາຕອບສນອງໃນແບບດຽວກັນກັບທີ່ດາວິດໄດ້ສັ່ງຊາວອິສຣາເອນໃຫ້ເຮັດ: ໂດຍການຮັບຮູ້ຄວາມບໍຣິສຸດຂອງພຣະເຈົ້າແລະໃຫ້ການຖວາຍສັຣເສີນບູຊາ.

## 2. ເພງສັຣເສີນ 99:4-5

*4. ຣິດທານຸພາບຂອງກະສັດຮັກຄວາມຍຸຕິທັມ ພຣະອົງສະຖາປະນາຄວາມທ່ຽງທັມ ພຣະອົງປະກອບຄວາມຍຸຕິທັມແລະຄວາມຊອບທັມຂຶ້ນໃນຢາໂຄບ. 5. ຈົ່ງຍົກຍໍພຣະກຽດພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາແລະນະມັສການທີ່ແທ່ນຮອງພຣະບາດຂອງພຣະອົງເພາະພຣະອົງບໍຣິສຸດ.*

ໃນການເລີ່ມຕົ້ນຂອງເນື້ອເພງສັກສິດນີ້, ກະສັດແລະຜູ້ຂຽນຄໍາເພງ, ດາວິດ, ໄດ້ຍອມຮັບເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າທີ່ຫາອັນປຽບບໍ່ໄດ້. ເຖິງແມ່ນວ່າດາວິດມີພື້ນຖານຄວາມຍິ່ງໃຫ່ຽຂອງພຣະເຈົ້າຢູ່ໃນການຄອບຄອງຂອງທ່ານໂດຍມີສິດທິອໍານາດເຕັມທີ່, ແຕ່

ຄວາມເປັນຈິງນັ້ນອຳນາດທັງໝົດແມ່ນຢູ່ໃນຄວາມບໍຣິສຸດຂອງພຣະເຈົ້າ. ມັນສະແດງອອກໃນແງ່ຂອງ "ຮັກຄວາມຍຸຕິທັມ" ແລະ "ສະຖາປະນາຄວາມທ່ຽງທັມ."

ຄວາມຍິ່ງໃຫຍ່ຂອງໂລກໄດ້ຖືກຮັບຮູ້ໃນປວັດສາດໃນດ້ານພະລັງສ່ວນຕົວແລະການສະແດງໃຫ້ເຫັນເຖິງຄວາມເຂັ້ມແຂງທີ່ໂຫດຮ້າຍ, ໂດຍສະເພາະແມ່ນການທະຫານ. ໃນພຣະຄັມພີ, ພຣະເຈົ້າມີຄວາມເຂັ້ມແຂງແລະມີອຳນາດທັງໝົດຢ່າງຈະແຈ້ງ. (ນາຮູມ 1:7). ນີ້ແມ່ນເຫັນໄດ້ຈະແຈ້ງທີ່ສຸດໃນພາລະບົດບາດຂອງພຣະອົງເປັນນັກຮົບທີ່ສູງສົ່ງແລະໂດຍພຣະວັດຈະນະຂອງພຣະອົງເອີ້ນພຣະອົງເປັນ "ພຣະອົງຜູ້ເປັນເຈົ້າຈອມໂຍທາ" (1 ຊາມູເອນ 17:45). ມັນແມ່ນໃນຄວາມສາມາດທີ່ພຣະເຈົ້າໄດ້ຖືກພັນລະນາວ່າເປັນຜູ້ບັນຊາການກອງທັບສວັນແລະກະສັດແຫ່ງຣັສມີທີ່ບໍ່ເຄີຍມີມາກ່ອນ, ບາງສິ່ງບາງຢ່າງທີ່ດາວິດໄດ້ເຂົ້າໃຈເພາະທ່ານກໍເປັນນັກຮົບທີ່ປະສົບຜົນສຳເຣັດຜູ້ນຶ່ງດ້ວຍ.

ພຣະຄັມພີບໍ່ໄດ້ນຳພວກເຮົາໄປຫາອຳນາດຂອງພຣະເຈົ້າເປັນເຫດຜົນຕົ້ນຕໍທີ່ພຣະອົງຖືກແຍກອອກຈາກຣັສມີຂອງພຣະອົງ. ແທນທີ່ຈະເປັນ, ດາວິດໄດ້ຊີ້ໃຫ້ເຫັນສິດອຳນາດສິລທັມຂອງພຣະເຈົ້າເປັນພື້ນຖານສຳລັບການທີ່ພຣະອົງໄດ້ຮັບການສັຣເສີນ. ໃນອີກຄຳນຶ່ງ, ລັກສະນະພື້ນຖານຂອງພຣະເຈົ້າແມ່ນອີງໃສ່ລັກສະນະສ່ວນຕົວຂອງພຣະອົງ. ມັນເປັນຄວາມບໍຣິສຸດຂອງພຣະເຈົ້າທີ່ເຮັດໃຫ້ພຣະອົງເປັນຜູ້ຍິ່ງໃຫຍ່ແລະເຮັດໃຫ້ພຣະອົງແຕກຕ່າງຈາກກະສັດອື່ນໃນໂລກແລະສິ່ງທີ່ເອີ້ນວ່າພະຕ່າງໆຂອງໂລກ.

ສິ່ງນຶ່ງທີ່ເປັນເຣື່ອງທັມມະດາຂອງກະສັດທຸກຍຸກທຸກສມັຍແມ່ນການຄອບຄອງສິດອຳນາດແລະໜ້າທີ່ຮັບຜິດຊອບທີ່ໄປຄຽງຄູ່ກັບເຣື່ອງນັ້ນ. ຢ່າງບໍ່ປ່ຽນແປງ, ກະສັດອົງໃໝ່ໄດ້ໃຊ້ອຳນາດການປົກຄອງຂອງເຂົາເອງເພື່ອຮັບປະກັນວ່າອານາຈັກທີ່ໄດ້ຖືກຮັບມອບໝາຍໃຫ້ແກ່ເຂົາແລ້ວ. ນີ້ລວມເຖິງການຕັກເຕືອນເພື່ອສ້າງສັນຕິພາບ, ຜ່ານການປົກປັກຮັກສາກົດໝາຍແລະການຄຸ້ມຄອງຄວາມຍຸຕິທັມ. ໃນຖານະເປັນກະສັດ, ດາວິດຮູ້ດີເຖິງຄວາມສຳຄັນຂອງການສ້າງຄວາມຍຸຕິທັມແລະການບໍລິຫານຄວາມຍຸຕິທັມ. ຄວາມຈິງນີ້ຍັງມີຄວາມສຳຄັນຢູ່ໃນເທົ່າທຸກວັນນີ້. ເມື່ອພວກເຮົາເປັນພະຍານເຖິງຄວາມຍຸຕິທັມແລະຄວາມບໍ່ຍຸຕິທັມ ໂດຍຜູ້ທີ່ຢູ່ໃນຕຳແໜ່ງຂອງອຳນາດແລະໃນສັງຄົມ. ພວກເຮົາຖືກເຕືອນໃຫ້ຮູ້ວ່ານັ້ນບໍ່ແມ່ນພຣະປະສົງຂອງພຣະເຈົ້າ. ເພງສັຣເສີນຂອງດາວິດໄດ້ເຍີງໃຫ້ເຫັນຮູບພາບຂອງຄວາມບໍຣິສຸດຂອງພຣະເຈົ້າ, ທີ່ຖືກແຍກອອກແລະປະຕິບັດຄວາມຍຸຕິທັມໃນຄວາມຍິ່ງໃຫ່ຍຂອງພຣະອົງ. ໃນອະນາຄົດ, ພຣະຜູ້ເປັນເຈົ້າພຣະເຢຊູຄຣິດຈະຄອບຄອງບັນລັງຂອງດາວິດໃນຖານະເປັນກະສັດຂອງກະສັດແລະກະສັດແຫ່ງສັນຕິພາບ, ແລະພຣະອົງຈະເຮັດໃຫ້ທຸກສິ່ງຖືກຕ້ອງ.

*ສະຖານທີ່ໃດທີ່ທ່ານລໍຄອຍຢາກເຫັນຄວາມຍຸຕິທັມໃນໂລກຂອງພວກເຮົາ?*

## 3. ເພງສັຣເສີນ 99:6-9

*6. ໂມເຊແລະອາໂຣນຢູ່ໃນພວກປະໂລຫິດຂອງພຣະອົງ ຊາມູເອນຢູ່ໃນພວກທີ່ທູນອອກພຣະນາມຂອງພຣະອົງດ້ວຍພວກເພິ່ນຮ້ອງທູນພຣະຜູ້ເປັນເຈົ້າແລະພຣະອົງຕອບເພິ່ນເຫລົ່ານັ້ນ. 7. ພຣະອົງກ່າວກັບເພິ່ນໃນເສົາເມກ ເພິ່ນທັງປວງໄດ້ຮັກສາບັນດາພຣະໂອວາດຂອງພຣະອົງແລະກົດທີ່ພຣະອົງປະທານແກ່ເພິ່ນ. 8. ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍທັງຫລາຍ ພຣະອົງຕອບເພິ່ນເຫລົ່ານັ້ນພຣະອົງເປັນພຣະເຈົ້າຜູ້ຍົກໂທດເພິ່ນເຫລົ່ານັ້ນ ແຕ່ເປັນຜູ້ສນອງການກະທຳຜິດຂອງພວກເພິ່ນ. 9. ຈົ່ງຍົກຍໍພຣະກຽດພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາແລະນະມັສການທີ່ພູເຂົາອັນບໍຣິສຸດຂອງພຣະອົງ ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາບໍຣິສຸດ.*

ຄວາມສນິດສນົມທາງຈິດວິນຍານກັບພຣະເຈົ້າເປັນສິ່ງທີ່ແປກປລາດໃນພຣະຄັມພີ, ໂດຍສະເພາະໃນພຣະຄັມພີໃໝ່. ບໍ່ມີຄົນໃດພົບກັບຕົວຢ່າງຂອງຄວາມສນິດສນົມເປັນການສ່ວນຕົວກັບພຣະເຈົ້າໃນການຂຽນບັນທຶກໄວ້ໃນຄວາມເຊື່ອອື່ນໆທີ່ຖືວ່າເປັນຈິງ. ແນວຄວາມຄິດຄືກັບການເປັນເພື່ອນຂອງພຣະເຈົ້າ(ໂຢຮັນ 15:15). ພຣະເຈົ້າຮູ້ຈັກກັບຄວາມທຸກທໍຣະມານຂອງພວກເຮົາ (ເຮັບເຣີ 4:15), ແລະຜູ້ຄົນທີ່ມີຄວາມໝັ້ນໃຈເຂົ້າໄປໃກ້ທີ່ປະທັບຂອງພຣະເຈົ້າພຣະວິນຍານບໍຣິສຸດ (ເຮັບເຣີ 4:16) ທັງໝົດແມ່ນແນວຄວາມຄິດຕ່າງໆທາງສາສນາທົ່ວທຸກປະເທດໃນໂລກ.

ພຣະຄັມພີສເນີໃຫ້ເຫັນການສາມະຄີທັມກັບພຣະເຈົ້າວ່າເປັນໜ້າອັສຈັນຢ່າງແທ້ຈິງທີ່ຜູ້ເຊື່ອຟັງຄວາມມີປະສົບການໄດ້ເປັນປະຈຳ.

ເຖິງປານນັ້ນ, ມັນເປັນສິ່ງສຳຄັນທີ່ພວກເຮົາບໍ່ຍອມໃຫ້ຕົວເຮົາເອງຄຸ້ນເຄີຍເກີນໄປກັບພຣະເຈົ້າ. ພວກເຮົາບໍ່ຕ້ອງລືມວ່າເຖິງວ່າຈະມີຄວາມໃກ້ຊິດເປັນເພື່ອນສນິດຂອງພຣະອົງ-ອັນທີ່ນັກເທວະວິທຍາເອີ້ນວ່າ "ຊຶ່ງສະຖິດຢູ່ພາຍໃນ"-ພຣະເຈົ້າຍັງຖືກແຍກຢູ່ໃນການກະທຳຂອງພຣະອົງຕໍ່ພວກເຮົາ-ອັນທີ່ເອີ້ນວ່າ "ເໜືອກວ່າ" ການສົມດູນດັ່ງນີ້ຈະຕ້ອງປະທະລະຫວ່າງຄວາມຈິງເຫຼົ່ານີ້ທີ່ຂນານຄຽງກັນ.

*ການກະທຳຂອງພຣະເຈົ້າໃນອະດີດໃຫ້ຄວາມໝັ້ນໃຈແກ່ທ່ານໃນການເດີນກັບພຣະອົງທຸກໆວັນແນວໃດ?*

ເນື່ອງຈາກຄວາມຍິ່ງໃຫຍ່ຂອງພຣະເຈົ້າແລະຄວາມອ່ອນແອທີ່ເປັນການບາບຂອງມະນຸດ, ມະນຸດເຮົາຈຶ່ງບໍ່ສາມາດເຂົ້າຫາພຣະເຈົ້າໄດ້ໂດຍບໍ່ມີຜູ້ໄກ່ເກັ່ຽ. ໃນພຣະຄັມພີ, ຜູ້ທີ່ເປັນຜູ້ໄກ່ເກັ່ຽເຫຼົ່ານີ້ຖືກລະບຸເອີ້ນວ່າເປັນປະໂລຫິດແລະຜູ້ປະກາດພຣະທັມ. ອາໂຣນອ້າຍຂອງໂມເຊໄດ້ເປັນຕົວແທນຂອງພວກປະໂລຫິດ, ຊາມູເອນໄດ້ເປັນຕົວແທນຂອງພວກປະກາດພຣະທັມ. ພຣະເຈົ້າໄດ້ໃຊ້ຊາຍເຫຼົ່ານີ້ເພື່ອຊ່ວຍປະຊາຊົນໃຫ້ສ້າງສາຍສັມພັນກັບພຣະເຈົ້າຫຼືສ້າງຕັ້ງ-ການສາມະຄີທັມກັບພຣະອົງຄືນໃໝ່.

ໃນການກະທຳຂອງພຣະອົງຕໍ່ມະນຸດ, ພຣະເຈົ້າຈະໄດ້ຮັບຄວາມຢ້ານກົວຈາກມະນຸດຄົນບາບ, ແຕ່ຄວາມຮັກແລະການເຊື່ອຟັງຂອງຜູ້ທີ່ສແວງຫາການໃຫ້ອະພັຍຂອງພຣະອົງ. ການຕອບສນອງທີ່ຖືກຕ້ອງຂອງພວກເຮົາຕໍ່ພຣະເຈົ້າຜູ້ຍິ່ງໃຫຍ່ແລະໜ້າຢ້ານກົວແມ່ນການຍົກຍ້ອງສັຣເສີນພຣະອົງແລະກົ້ມຂາບຕໍ່ໜ້າພຣະອົງໃນການນະມັສການ, ພຣະອົງພຽງຜູ້ດຽວທີ່ບໍຣິສຸດ.

## ນຳໃຊ້ໃນຊີວິດ

ພຣະເຈົ້າເປັນພຣະເຈົ້າອົງບໍຣິສຸດແລະແຍກໄວ້ຈາກທຸກສິ່ງທຸກຢ່າງຂອງການຊົງສ້າງຂອງພຣະອົງ. ເລືອກເອົານຶ່ງຂໍ້ຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ອະທິຖານ.** ຂໍໃຫ້ພຣະເຈົ້າເປີດເຜີຍທຸກຄັ້ງໃນຄວາມຄິດຂອງທ່ານ, ທັດສະນະຄະຕິ, ຫຼືພຶດຕິກຳທີ່ເຮັດໃຫ້ພຣະອົງຜິດຫັວງ. ຂໍໃຫ້ພຣະເຈົ້າໄຖ່ເອົາຂໍ້ບົກພ່ອງຂອງລັກສະນະເຫຼົ່ານັ້ນແລະເຮັດໃຫ້ທ່ານເປັນເໝືອນພຣະອົງຫຼາຍຂຶ້ນ.
- **ສະທ້ອນ.** ນັ່ງສະມາທິກ່ຽວກັບຄຸນລັກສະນະທາງສິລທັມຂອງພຣະເຈົ້າ (ຄວາມບໍຣິສຸດ, ຄວາມຊອບທັມ, ຄວາມຍຸຕິທັມ, ຄວາມຮັກ, ຄວາມເມດຕາ, ສະຕິປັນຍາ). ກຳນົດຫຼັກການເຫຼົ່ານັ້ນແລະຂໍໃຫ້ພຣະເຈົ້າຊ່ວຍທ່ານໃຫ້ມີໃຈປາຖນາຄຸນລັກສະນະເຫຼົ່ານັ້ນໃນຊີວິດຂອງທ່ານ.
- **ຄົ້ນຄົ້ວຫາ.** ຄົ້ນຫາຂໍ້ພຣະຄັມພີໂດຍນຳໃຊ້ເຄື່ອງມືທີ່ມີຢູ່ໃນຫ້ອງສມຸດຂອງທ່ານຫຼືໃນອອນລາຍ. ບັນທຶກຕົວຢ່າງຂອງຄວາມຍິ່ງໃຫຍ່ຂອງພຣະເຈົ້າແລະວິທີທີ່ພຣະອົງຖືກແຍກອອກຈາກການຊົງສ້າງທັງໝົດ. ຂໍໃຫ້ພຣະເຈົ້າເປີດຈິດໃຈຂອງທ່ານໃຫ້ເຂົ້າໃຈພຣະຣັສມີອັນຍິ່ງໃຫຍ່ຂອງພຣະອົງ. ຫຼັງຈາກນັ້ນໃຫ້ສະທ້ອນພຣະລັກສະນະຂອງພຣະອົງຜ່ານທາງຕົວທ່ານໃນຂນະທີ່ທ່ານໄດ້ປະກາດອຳນາດການປ່ຽນແປງຂອງພຣະອົງໃນຊີວິດຂອງທ່ານ.

ເມື່ອພວກເຮົາສແວງຫາທີ່ຈະເຕີບໂຕໃນຄວາມເຂົ້າໃຈຂອງພວກເຮົາກ່ຽວກັບຄວາມບໍຣິສຸດຂອງພຣະເຈົ້າ, ພຣະອົງສາມາດເຮັດໃຫ້ພວກເຮົາເປັນຄົນບໍຣິສຸດໄດ້ເກີນກ່ວາຄວາມເຂົ້າໃຈຂອງພວກເຮົາ. ໃນຂນະທີ່ພວກເຮົາເພີ້ມຄວາມເຕີບໂຕໃນຄວາມເຊື່ອສ່ວນຕົວ. ຂໍໃຫ້ພວກເຮົາຍຶດໝັ້ນໃນການເປັນຄົນບໍຣິສຸດດັ່ງທີ່ພຣະອົງບໍຣິສຸດ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**